ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 07992 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 12 ທັນວາ 2018

# ແຈ້ງການ

ເຖິງ: ບັນດາພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ ແລະ ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ.

- ຜູ້ປະກອບການທີ່ດຳເນີນທຸລະກິດນຳເຂົ້ານ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

**ເລື່ອງ: ການຈັດຕັ້ງປະຕິບັດໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟ (ເສຍພາສີ-ອາກອນ) ດ້ວຍຕົນເອງ ບໍ 88.**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍພາສີສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ແຈ້ງການຂອງກະຊວງການເງິນ ສະບັບເລກທີ 3463/ກງ, ລົງວັນທີ 29 ຕຸລາ 2018;
- ອີງຕາມ ບົດແນະນຳຂອງກົມພາສີ ສະບັບເລກທີ 06775/ກພສ, ລົງວັນທີ 09 ພະຈິກ 2018 ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟ (ເສຍພາສີ-ອາກອນ) ດ້ວຍຕົນເອງ.
- ອີງຕາມ ແຈ້ງການຂອງກົມພາສີ ສະບັບເລກທີ 07014/ກພສ, ລົງວັນທີ 14 ພະຈິກ 2018;

## ຫົວໜ້າກົມພາສີ ອອກແຈ້ງການ ດັ່ງນີ້:

1. ໃຫ້ຜູ້ປະກອບການທີ່ດຳເນີນທຸລະກິດນຳເຂົ້ານ້ຳມັນເຊື້ອໄຟ ຈົ່ງໄດ້ຮີບຮ້ອນປະກອບເອກະສານທີ່ຈຳເປັນແລ້ວສະເໜີມາຍັງກົມພາສີ ເພື່ອກວດກາບັນດາເງື່ອນໄຂ ແລະ ອອກຂໍ້ຕົກລົງໃນການມອບສິດອອກໃບເຄື່ອນຍ້າຍນ້ຳມັນເຊື້ອໄຟ (ເສຍພາສີ-ອາກອນ) ດ້ວຍຕົນເອງ ບໍ 88 ແລະ ນຳໃຊ້ເອກະສານດັ່ງກ່າວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ການຈັດຕັ້ງປະຕິບັດໃບເຄື່ອນຍ້າຍນ້ຳມັນເຊື້ອໄຟ (ເສຍພາສີ-ອາກອນ) ດ້ວຍຕົນເອງ ບໍ 88 ແມ່ນມີຜົນບັງຄັບໃຊ້ນັບແຕ່ ວັນທີ 03 ມັງກອນ 2019 ເປັນຕົ້ນໄປ. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການເພີ່ມເຕີມ ສະບັບເລກທີ 0729/ກພສ, ລົງວັນທີ 12 ກຸມພາ 2018 ວ່າດ້ວຍການອອກເອກະສານເຄື່ອນຍ້າຍສິນຄ້າຄ້ຳປະກັນ (ສຳລັບນ້ຳມັນເຊື້ອໄຟ);
3. ມອບໃຫ້ບັນດາພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ, ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ, ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ປະກອບການຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ກະຊວງການເງິນ

ກົມພາສີ

ບຸນປະເສີດ ສີກຸນລະບຸດ